----2080
15 OCT 2014
----1546

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 362 /ລບ

ນະຄອນຫລວງວຽງຈັນ, ວັນທີ 7-10- 2014

# ດຳລັດ
## ວ່າດ້ວຍກອງທຶນມໍລະດົກແຫ່ງຊາດ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍມໍລະດົກແຫ່ງຊາດ ສະບັບເລກທີ 08/ສພຊ, ລົງວັນທີ 09 ພະຈິກ 2005;
- ອີງຕາມໜັງສືສະເໜີຂອງລັດຖະມົນຕີວ່າການ ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 354/ຖວທ, ລົງວັນທີ 17/06/2014.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະມາດຕະການ ກ່ຽວກັບການສ້າງຕັ້ງ, ການຄຸ້ມຄອງ, ນຳໃຊ້ ແລະຕິດຕາມ ກວດກາ ກອງທຶນມໍລະດົກແຫ່ງຊາດ ເພື່ອລະດົມ, ຂົນຂວາຍ, ສະສົມທຶນ, ສ້າງ ແລະເພີ່ມທະວີຄວາມເຂັ້ມແຂງທາງດ້ານການເງິນໂດຍລວມແຫຼ່ງທຶນຕ່າງໆ ໃຫ້ມີທຶນພຽງພໍ ແລະໝັ້ນຄົງ ລວມທັງລາຍຮັບທີ່ເກີດຂຶ້ນບົນພື້ນຖານມໍລະດົກແຫ່ງຊາດເຂົ້າເປັນກອງທຶນລວມສູນ, ສາມາດສະໜອງທຶນເຂົ້າໃນການປົກປັກຮັກສາ, ອະນຸລັກ, ບູລະນະ, ປະຕິສັງຂອນມໍລະດົກຂອງຊາດ ແນໃສ່ພັດທະນາ ແລະສົ່ງເສີມວຽກງານກ່ຽວກັບມໍລະດົກ, ຮັກສາໄວ້ຊຶ່ງຄຸນຄ່າຂອງມໍລະດົກທາງ ວັດທະນະທຳ, ປະຫວັດສາດ ແລະທຳມະຊາດ ທີ່ເປັນປັດໄຈຄ້ຳປະກັນການຍືນຍົງຄົງຕົວ ຂອງມໍລະດົກແຫ່ງຊາດ ຕະຫຼອດໄປ.

### ມາດຕາ 2 ກອງທຶນມໍຣະດົກແຫ່ງຊາດ

ກອງທຶນມໍຣະດົກແຫ່ງຊາດ ຂຽນຫຍໍ້ວ່າ: "ກມຊ"ແລະຂຽນເປັນພາສາອັງກິດວ່າ:"Heritage Fund" ແມ່ນການຈັດຕັ້ງໜຶ່ງຂອງລັດ, ສ້າງຕັ້ງຂຶ້ນເພື່ອລະດົມທຶນ ນຳໃຊ້ເຂົ້າໃນວຽກງານກ່ຽວກັບມໍລະດົກທາງວັດທະນະທຳ, ປະຫວັດສາດ ແລະທຳມະຊາດ ຊຶ່ງຢູ່ພາຍໃຕ້ການຊີ້ນຳ ໂດຍກົງຂອງຄະນະກຳມະການມໍລະດົກແຫ່ງຊາດ ມີໜ້າທີ່ໃນການຄຸ້ມຄອງການເຄື່ອນໄຫວວຽກງານຂອງກອງທຶນ ໃຫ້ມີຄວາມໂປ່ງໃສ ແລະມີປະສິດທິພາບ.

### ມາດຕາ 3 ຫຼັກການບໍລິຫານ, ຄຸ້ມຄອງ ແລະນຳໃຊ້ ກມຊ

ການບໍລິຫານ, ຄຸ້ມຄອງ ແລະນຳໃຊ້ ກມຊ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ທຸກການຈັດຕັ້ງ ແລະການເຄື່ອນໄຫວຂອງ ກມຊ ຈະຕ້ອງມີການສ້າງແຜນການ, ການຈັດຕັ້ງປະຕິບັດ, ການສະຫຼຸບ, ການກວດກາ ແລະຕີລາຄາເປັນປົກກະຕິຕາມສົກປີງົບປະມານແຫ່ງລັດ, ຮັບປະກັນຄວາມໂປ່ງໃສໃນການບໍລິຫານ ແລະນຳໃຊ້ກອງທຶນໃຫ້ທັນສະພາບການໃນການປັບປຸງ ແລະແກ້ໄຂວຽກງານ ກມຊ ໃຫ້ບັນລຸຕາມເປົ້າໝາຍ ແລະແຜນການທີ່ວາງໄວ້ໃຫ້ມີປະສິດທິຜົນສູງສຸດ;

2. ການຄຸ້ມຄອງ ແລະນຳໃຊ້ກອງທຶນ ຕ້ອງປະຕິບັດຕາມຫຼັກການລວມສູນ ແລະເປັນເອກະພາບ ໃນຂອບເຂດທົ່ວປະເທດ ແລະຕາມລະບຽບກົດໝາຍ;

3. ກອງທຶນທີ່ຕັ້ງຢູ່ສູນກາງ ແລະທ້ອງຖິ່ນ ຕ້ອງເປີດບັນຊີເງິນຝາກກອງທຶນ ຢູ່ຄັງເງິນແຫ່ງຊາດ ແລະລາຍຮັບທັງໝົດຂອງກອງທຶນ ຕ້ອງມອບເຂົ້າບັນຊີເງິນຝາກຂອງກອງທຶນ ຕາມລະບຽບການຂອງກະຊວງການເງິນ. ລະບົບວິທີການຖອນເງິນຕ້ອງປະຕິບັດຕາມລະບຽບການຖືບັນຊີ.

4. ການນຳໃຊ້ກອງທຶນ ຕ້ອງປະຕິບັດຕາມເປົ້າໝາຍທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ແລະຕາມແຜນຍຸດທະສາດ ລວມທັງແຜນລາຍຮັບ-ລາຍຈ່າຍປະຈຳປີຂອງ ກມຊ ທີ່ສະພາບໍລິຫານ ກມຊ ເປັນຜູ້ພິຈາລະນາ ແລ້ວນຳສະເໜີຕໍ່ຄະນະກຳມະການມໍຣະດົກແຫ່ງຊາດ ເພື່ອພິຈາລະນາຕົກລົງ ແລະຮັບຮອງ.

## ໝວດທີ 2
## ແຫຼ່ງລາຍຮັບ ແລະການນຳໃຊ້ກອງທຶນ

### ມາດຕາ 4 ແຫຼ່ງລາຍຮັບ

ກອງທຶນມໍຣະດົກແຫ່ງຊາດ ໄດ້ມາຈາກແຫຼ່ງຕ່າງໆ ດັ່ງນີ້:

1. ງົບປະມານຂອງລັດ;
2. ລາຍໄດ້ຈາກການນຳໃຊ້ຄຸນຄ່າຂອງມໍຣະດົກແຫ່ງຊາດ ເຊັ່ນ ຄ່າການບໍລິການເຂົ້າຊົມ, ຄ່າການຖ່າຍທຳເພື່ອຈຸດປະສົງທາງການຄ້າ ແລະຄ່າການຄົ້ນຄວ້າວິໄຈມໍຣະດົກແຫ່ງຊາດ;